ເຈ້ຍຂໍ້ມູນ

AEC
Australian Electoral Commission

# ການປ່ອນບັດຖ້າທ່ານມີ COVID-19

BE COVIDSAFE



ຖ້າທ່ານກວດພົບວ່າເປັນCOVID-19 ທາງບວກແລະຈະຢູ່ໃນການແຍກຕົວໃນມື້ເລືອກຕັ້ງ, ທ່ານຈະບໍ່ສາມາດລົງຄະແນນສຽງດ້ວຍຕົນເອງຢູ່ບ່ອນປ່ອນບັດເລືອກຕັ້ງຂອງລັດຖະບານກາງປີ 2022 ໃນວັນເສົາ ວັນທີ 21 ພຶດສະພາ.

ການລົງຄະແນນສຽງທາງໂທລະສັບຈະມີໃຫ້ຕັ້ງແຕ່ວັນພະຫັດ ວັນທີ 19 ຫາ ວັນເສົາ ວັນທີ 21 ພຶດສະພາ, ສໍາລັບຄົນທີ່ກວດພົບວ່າເປັນ COVID-19 ທາງບວກຫຼັງຈາກ 6ໂມງແລງ ຕາມເວລາທ້ອງຖິ່ນ ວັນສຸກ ວັນທີ 13 ພຶດສະພາ.

ຖ້າທ່ານເປັນຜູ້ຕິດຕໍ່ໃກ້ຊິດແຕ່ບໍ່ມີອາການໃດໆ ແລະ ບໍ່ຕ້ອງແຍກຕົວຢູ່ໂດດດ່ຽວ ທ່ານກໍຍັງສາມາດໄປປ່ອນບັດເລືອກຕັ້ງໄດ້ດ້ວຍຕົນເອງທີ່ສະຖານທີ່ປ່ອນບັດເລືອກຕັ້ງ.

## ວິທີການລົງຄະແນນສຽງທາງໂທລະສັບ

### 1 ລົງທະບຽນ

- ກະກຽມຫຼັກຖານຂອງການເປັນ COVID-19 ທາງບວກ. ອັນນີ້ຄວນຈະເປັນ:
  - ການກວດທາງ PCR – ສະຖານທີ່ຂອງບ່ອນກວດ, ວັນທີແລະເວລາຂອງການກວດໃນທາງບວກຂອງທ່ານ ແລະນໍາເບີອ້າງອີງຈາກໜ່ວຍງານດ້ານສຸຂະພາບຂອງທ່ານ (ຖ້າມີ)
  - ຖ້າກວດດ້ວຍ RAT (ຣາປິດ ແອນຕິເຈັນ) – ຍີ່ຫໍ້ ແລະ ໝາຍເລກຊີຣຽວ (ຖ້າມີ), ວັນທີ ແລະ ເວລາຂອງການກວດເປັນທາງບວກຂອງທ່ານ, ແລະໝາຍເລກອ້າງອີງຈາກເຈົ້າໜ້າທີ່ສາທາລະນະສຸກ ທີ່ທ່ານລົງທະບຽນການກວດເປັນທາງບວກຂອງທ່ານນໍາ (ຖ້າມີ).

- ໂທຫາເບີ **1800 413 960** ແລະ ເລືອກເອົາຕົວເລືອກ 1 ເພື່ອລົງທະບຽນ. ທ່ານສາມາດຂໍເອົານາຍພາສາທີ່ປາກພາສາຂອງທ່ານ.ກຽມຫຼັກຖານຂອງທ່ານໃຫ້ພ້ອມ, ເພາະວ່າໃນລະຫວ່າງການໂທ, ທ່ານຈະຖືກຂໍໃຫ້ຢັ້ງຢືນວ່າທ່ານບໍ່ສາມາດໄປບ່ອນປ່ອນບັດໄດ້ ເພາະວ່າທ່ານພວມຢູ່ໃນການແຍກຕົວ ຍ້ອນ COVID-19.

- ເຂົາຈະສົ່ງເລກທະບຽນການລົງຄະແນນສຽງທາງໂທລະສັບແປດຕົວເລກ ແລະ PIN ທີ່ປອດໄພຫົກຕົວເລກຂອງທ່ານມາທາງ SMS ຫຼື ອີເມລ໌. ທ່ານຕ້ອງໃຊ້ສິ່ງເຫຼົ່ານີ້ເມື່ອທ່ານໂທເພື່ອລົງຄະແນນສຽງຂອງທ່ານ.

### 2 ການລົງຄະແນນສຽງ

**ມັນເປັນໄປໄດ້ວ່າຈະມີເວລາລໍຖ້າທີ່ຍາວນານໃນການໂທນີ້.**

- ໄປທີ່ລິ້ງກ໌ ຈາກ SMS ຫຼື ອີເມລ໌ຂອງທ່ານເພື່ອເບິ່ງຮູບພາບຂອງບັດລົງຄະແນນສຽງສໍາລັບເຂດເລືອກຕັ້ງຂອງທ່ານ.

- ກຽມໝາຍເລກລົງທະບຽນແປດຕົວເລກ, PIN, ແລະຄວາມມັກໃນການລົງຄະແນນສຽງຂອງທ່ານໃຫ້ພ້ອມ.

- ໂທເບີ **1800 413 960** ແລະ ເລືອກເອົາຕົວເລືອກ 2 ເພື່ອລົງຄະແນນສຽງ. ທ່ານສາມາດຂໍເອົານາຍພາສາທີ່ປາກພາສາຂອງທ່ານ. ຜູ້ຮັບສາຍຈະຂໍໃຫ້ທ່ານ:
  - ຢັ້ງຢືນອີກເທື່ອໜຶ່ງກ່ຽວກັບການມີສິດລົງຄະແນນສຽງທາງໂທລະສັບຂອງທ່ານ
  - ໃຫ້ເລກທະບຽນແປດຕົວເລກ ແລະ PIN ທີ່ປອດໄພຫົກຕົວເລກ (ຢ່າໃຫ້ຊື່ຫຼືທີ່ຢູ່ຂອງທ່ານ - ອັນນີ້ ຈະຮັບປະກັນການລົງຄະແນນສຽງຂອງທ່ານໃຫ້ເປັນຄວາມລັບ)
  - ຢືນຢັນວ່າທ່ານມີຮູບຂອງບັດລົງຄະແນນ ສຽງຢູ່ຕໍ່ໜ້າທ່ານ
  - ອະທິບາຍວ່າທ່ານຕ້ອງການໃຫ້ຜູ້ຮັບສາຍ ບັນທຶກການລົງຄະແນນສຽງຂອງທ່ານ ແນວໃດ
  - ຢືນຢັນວ່ານີ້ແມ່ນວິທີທີ່ທ່ານຕ້ອງການລົງຄະ ແນນສຽງ, ກ່ອນທີ່ຈະຈົບການໂທ.

22-1681

# ເວລາເຮັດການ

## ການລົງທະບຽນທາງອອນໄລນ໌

| | | |
|---|---|---|
| ເປີດ | ວັນພຸດ ວັນທີ 18 ພຶດສະພາ | 6.01 ໂມງແລງ AEST |
| ປິດ | ວັນເສົາ ວັນທີ 21 ພຶດສະພາ | 4.00 ໂມງແລງ AEST |

| | | |
|---|---|---|
| **ການລົງທະບຽນທາງໂທລະສັບ** | ວັນພະຫັດ ວັນທີ 19 ພຶດສະພາ | 8.30 ໂມງເຊົ້າ ຫາ 5.30 ໂມງແລງ ເວລາທ້ອງຖິ່ນ |
| | ວັນສຸກ ວັນທີ 20 ພຶດສະພາ | 8.30 ໂມງເຊົ້າ ຫາ 5.30 ໂມງແລງ ເວລາທ້ອງຖິ່ນ |
| | ວັນເສົາ ວັນທີ 21 ພຶດສະພາ | 8.00 ໂມງເຊົ້າ ຫາ 4.00 ໂມງແລງ ເວລາທ້ອງຖິ່ນ |

| | | |
|---|---|---|
| **ລົງຄະແນນສຽງທາງໂທລະສັບ** | ວັນພະຫັດ ວັນທີ 19 ພຶດສະພາ | 8.30 ໂມງເຊົ້າ ຫາ 5.30 ໂມງແລງ ເວລາທ້ອງຖິ່ນ |
| | ວັນສຸກ ວັນທີ 20 ພຶດສະພາ | 8.30 ໂມງເຊົ້າ ຫາ 6.00 ໂມງແລງ ເວລາທ້ອງຖິ່ນ |
| | ວັນເສົາ ວັນທີ 21 ພຶດສະພາ | 8.00 ໂມງເຊົ້າ ຫາ 6.00 ໂມງແລງ ເວລາທ້ອງຖິ່ນ |

ທ່ານຍັງສາມາດລົງຄະແນນສຽງຂອງທ່ານໄດ້ ຖ້າທ່ານໄດ້ລົງທະບຽນ ແລະ ລໍຖ້າຢູ່ສາຍເພື່ອລົງຄະແນນສຽງ ເມື່ອເວລາປ່ອນບັດປິດເວລາ 6:00 ໂມງແລງຂອງວັນເສົາ ວັນທີ 21 ພຶດສະພາ.

# ການລົງຄະແນນສຽງຂອງທ່ານປອດໄພ

ຂັ້ນຕອນເພື່ອຮັບປະກັນຄວາມຊື່ສັດຂອງການລົງຄະແນນສຽງທາງໂທລະສັບແມ່ນຄືກັນກັບຂັ້ນຕອນທີ່ຄະນະກໍາມາທິການການເລືອກຕັ້ງອອສເຕຣເລັຍນໍາໃຊ້ຢູ່ບ່ອນປ່ອນບັດ, ເຊິ່ງປະຕິບັດຕາມກົດໝາຍວ່າດ້ວຍການເລືອກຕັ້ງ.